# ລາຍງານບັນຫາຄວາມກຽດຊັງ/ການເລືອກປະຕິບັດ

ສະມາຊິກຊຸມຊົນໄດ້ຖ່າຍທອດເຫດການຄົນທີ່ເປັນເປົ້າຄວາມກຽດຊັງ ຂອງຜູ້ເຫັນເຫດການເຊື້ອສາຍອາຊີ ແລະ ເກາະປາຊີຟິກ (API) ໃນຊ່ວງການແຜ່ລະບາດພະຍາດໂຄວິດ 19 ໃຫ້ແກ່ Washington State Commission on Asian Pacific American Affairs (CAPAA). ໂຊກບໍ່ດີ, CAPAA ບໍ່ສາມາດເຮັດວຽກນີ້ໄດ້ສໍາເລັດ ຫລື ພວກເຮົາບໍ່ອາດຈະ ໃຫ້ຄໍາປຶກສາທາງກົດໝາຍໄດ້. ພວກເຮົາຂໍຮຽກຮ້ອງໃຫ້ຜູ້ເຄາະຮ້າຍທີ່ພົບກັບບັນຫາຄວາມກຽດຊັງທັງໝົດ ດໍາເນີນການຂັ້ນຕອນຕ່າງໆດັ່ງຕໍ່ໄປນີ້:

**ຂໍການຊ່ວຍເຫລືອທາງການແພດ, ຖ້າຈໍາເປັນ.**

**ຂຽນລາຍລະອຽດການອາດສະຍະກໍາທັງໝົດ ໄວເທົ່າທີ່ຈະໄວໄດ້ ຫລັງຈາກເຫດການເກີດຂຶ້ນ.** ລວມທັງຜູ້ກະທໍາຜິດ, ເພດ, ອາຍຸ, ສ່ວນສູງ, ເຊື້ອຊາດ, ນໍ້າໜັກ, ເສື້ອຜ້າ ແລະ ລັກສະນະເດັ່ນອື່ນໆ. ຖ້າມີການຄຸກຄາມ ຫລື ການສະແດງແນວຄິດອະຄະຕິ ໃຫ້ບັນທຶກໄວ້ໃນລາຍງານ.

**ເຮັດລາຍງານ.** ລາຍງານເຫດການໃຫ້ແກ່ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນ. ຖ້າຜູ້ເຄາະຮ້າຍບໍ່ຕ້ອງການ ໄປຫາຕໍາຫລວດ, ຍື່ນລາຍງານຫາໜ່ວຍງານສິດທິພົນລະເຮືອນທ້ອງຖິ່ນ/ສິດທິມະນຸດ ໃນເຂດຂອງທ່ານ). ແມ້ແຕ່ ຖ້າເຫດການບໍ່ຕອບກັບນິຍາມທາງກົດໝາຍຂອງການກໍ່ອະສິຍະກໍາຄວາມກຽດຊັງ, ຍັງມີຄວາມສໍາຄັນທີ່ຈະ ຕ້ອງໄດ້ລາຍງານໃຫ້ແກ່ອົງກອນທີ່ເໝາະສົມ. ກະລຸນາສົ່ງຂໍ້ມູນຕາມຂ້າງລຸ່ມນີ້.

ລັດ, ເຂດມົນທົນ ແລະ ລັດຖະບານຂັ້ນເມືອງ ແລະ ອົງກອນອື່ນໆ ຈະມີສະຖານທີ່ລາຍງານບັນຫາຄວາມກຽດຊັງ ແລະ ການເລືອກປະຕິບັດ ລວມທັງແຕ່ບໍ່ຈໍາກັດ ແຫລ່ງຂໍ້ມູນຕາມຂ້າງລຸ່ມນີ້:

- Washington State Human Rights Commission
  ພາຍໃຕ້ກົດໝາຍ, ທຸກຄົນຈະມີສິດ ທີ່ປາສະຈາກການເລືອກປະຕິບັດໃນສະຖານທີ່ເຮັດວຽກ, ໃນບ້ານພັກ ອາໄສ, ສະຖານທີ່ພັກສາທາລະນະ ຫລື ໃນເວລາຊອກຫາສິນເຊື່ອ ແລະ ປະກັນໄພ. ບຸກຄົນໃດໜຶ່ງ ທີ່ເຊື່ອວ່າ ຕົນເອງຖືກເລືອປະຕິບັດ ຕາມພື້ນຖານສະຖານະລະດັບຊັ້ນທີ່ໄດ້ຮັບການປົກປ້ອງ ອາດຈະແຈ້ງຂໍ້ຫາການ ເລືອກປະຕິບັດສໍາລັບຜູ້ວ່າຈ້າງ, ຜູ້ໃຫ້ບໍລິການທີ່ພັກອາໄສ ແລະ ທຸລະກິດຕ່າງໆ.

- King County Office of Civil Rights
  ຫ້ອງການນີ້ຈະມີອໍານາດໃນການຈັດການກັບບັນຫາການເລືອກປະຕິບັດ ສະເພາະສໍາລັບລັດຖະບານ ເຂດມົນທົນຄິງ ແລະ ສໍາລັບຜູ້ວ່າຈ້າງ, ຜູ້ໃຫ້ບໍລິການທີ່ພັກ ແລະ ຸທຸລະກິດທີ່ບໍ່ໄດ້ປະກອບຢູ່ໃນເຂດມົນທົນຄິງ (ຢູ່ນອກເມືອງຕ່າງໆ).

- Seattle Office for Civil Rights
  ຫ້ອງການນີ້ຈະຍົກສູງກົດໝາຍຕ່າງໆ ທີ່ປົກປ້ອງທ່ານ ຈາກການຄຸກຄາມ ການເລືອກປະຕິບັດ ໃນທີ່ພັກອາໄສ, ການວ່າຈ້າງ ຫລື ສະຖານທີ່ເຮັດວຽກ ພາຍໃນເຂດເມືອງຊີແອດໂທ.

- Spokane Police Department: ລາຍງານບັນຫາຄວາມກຽດຊັງ ແລະ ແນວຄິດອັກຄະຕິ
  ໜ້ານີ້ຈະລວມເອົາຂໍ້ມູນ ໃນສິ່ງທີ່ແມ່ນອາສິຍະກໍາຄວາມກຽດຊັງ ແລະ ວິທີລາຍງານບັນຫາດັ່ງກ່າວ.

- City of Spokane's Human Rights Commission
  ນີ້ແມ່ນຈຸດຕິດຕໍ່ທີ່ເໝາະສົມ ຖ້າທ່ານອາໄສຢູ່ເມືອງສະໂປເກນ. ໜ້ານີ້ຈະລວມເອົາຂໍ້ມູນປະເພດ ຂໍ້ຮ້ອງທຸກຕ່າງກັນ.

- ແບບຟອມລາຍງານເຫດການຄວາມກຽດຊັງຂອງ Spokane County Human Rights Task Force
  ນີ້ແມ່ນຈຸດຕິດຕໍ່ທີ່ເໝາະສົມ ຖ້າທ່ານອາໄສຢູ່ໃສ່ກໍ່ຕາມໃນເຂດມົນທົນສະໂປເກນ.

ລາຍງານເຫດການໃຫ້ໜຶ່ງໃນຫລາຍໆອົງກອນດັ່ງຕໍ່ໄປນີ້ ເພື່ອຊ່ວຍສຶກສາອົບຮົມປະຊາຊົນ ກ່ຽວກັບສິ່ງທີ່ກຳລັງເກີດຂຶ້ນ ແລະ ຮ່າງນະໂຍບາຍ. ທ່ານສາມາດໄປຫາ:

- [ລຸກຂຶ້ນຕໍ່ສູ້ກັບບັນຫາຄວາມກຽດຊັງ]
  Asian Americans Advancing Justice ກຳລັງຕິດຕາມກຳລະນີແນວຄວາມຄິດອັກຄະຕິ. ໂດຍການແຊ ສິ່ງທີ່ທ່ານໄດ້ພົບເຫັນ ຫລື ເຫັນ, ທ່ານສາມາດສຶກສາອົບຮົມປະຊາຊົນ, ສົ່ງເສີມຄົນອື່ນ, ສະແດງໃຫ້ຜູ້ບໍລິການ ທີ່ຕ້ອງການການຊ່ວຍເຫລືອ ແລະ ເສີມສ້າງຄວາມພະຍາຍາມສະໜັບສະໜູນ ສຳລັບການຕອບໂຕ້ ແລະ ປ້ອງກັນການກໍ່ອະສິຍະກຳຄວາມກຽດຊັງ. ມີແບບຟອມພາສາອັງກິດ, ຈີນ (ດັ່ງເດີມ ແລະ ປະຍຸກ), ເກົາຫລີ ແລະ ຫວຽດນາມ.

- [ແບບຟອມເຫດການຄວາມກຽດຊັງ AAPI]
  OCA – Asian Pacific American Advocates ແມ່ນມີອຸທິດຕົນໃນການພັດທະນາຄວາມເປັນຢູ່ທາງສັງຄົມ, ການເມືອງ ແລະ ເສດຖະກິດຂອງຊາວອາເມກາເຊື້ອສາຍອາຊີ ແລະ ໝູ່ເກາະປາຊິຟິກ (AAPIs). ຍື່ນເລື່ອງ ຄວາມກຽດຊັງ ຜ່ານແບບຟອມນີ້ ຈະຊ່ວຍໃຫ້ພວກເຮົາ OCA - Asian Pacific American Advocates ຈະຕິດຕາມບັນຫາຄວາມກຽດຊັງ ຕໍ່ກັບ AAPIs ທົ່ວເຂດມົນທົນ.

- [ຢຸດ AAPI Hate]
  Asian Pacific Policy and Planning Council (A3PCON) ແລະ Chinese for Affirmative Action (CAA) ໄດ້ດຳເນີນສູນລາຍງານນີ້ ເພື່ອໃຫ້ສະມາຊິກຊຸມຊົນ ລາຍງານເຫດການບັນຫາຄວາມກຽດຊັງ ທີ່ເຂົາເຈົ້າໄດ້ພົບ. ຂໍ້ມູນບຸກຄົນ ລວມທັງລາຍລະອຽດລັກສະນະຕົວບຸກຄົນ ຈະຖືກຮັກສາເປັນຄວາມລັບ ແລະ ຈະຖືກແບ່ງປັນສະ ເພາະຕາມການອະນຸຍາດ. ໂດຍລວມ, ຂໍ້ມູນຈະຖືກໃຊ້ ເພື່ອຊ່ວຍເຫລືອ, ສະໜັບສະໜູນ ແລະ ການສຶກສາ. ມີແບບຟອມພາສາອັງກິດ, ຫວຽດນາມ, ຈີນ, ເກົາຫລີ, ກຳປູເຈັ້ຍ, ໄທ ແລະ ຍີ່ປຸ່ນ.

ທ້າຍສຸດ, Human Rights Campaign (HRC) ຈະໃຫ້ຄຳແນະນຳແກ່ຜູ້ເຄາະຮ້າຍອະສິຍະກຳຄວາມກຽດຊັງ: [ສິ່ງທີ່ເຮັດ ຖ້າທ່ານເປັນຜູ້ເຄາະຮ້າຍບັນຫາອະສິຍະກຳຄວາມກຽດຊັງ].